ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 638 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 01. ທັນວາ. 2021

# ດຳລັດ
# ວ່າດ້ວຍຊຸດເຄື່ອງນຸ່ງປະຈຳຊາດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ໜັງສືສະເໜີຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 584/ຖວທ, ລົງວັນທີ 18 ພະຈິກ 2021.

## ນາຍົກລັດຖະມົນຕີ ອອກດຳລັດ:

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດອົງປະກອບ, ມາດຕະຖານ ຂອງຊຸດເຄື່ອງນຸ່ງປະຈຳຊາດ ເພື່ອໃຫ້ມີຄວາມເປັນເອກະພາບ, ຮັກສາໄດ້ລັກສະນະຊາດ, ມະຫາຊົນ ແລະ ກ້າວໜ້າ ແນໃສ່ອະນຸລັກ, ສືບທອດ ຮີດຄອງປະເພນີ, ເສີມຂະຫຍາຍ ແລະ ພັດທະນາ ຫົວຄິດປະດິດສ້າງຂອງປະຊາຊົນ ດ້ານສີໄມ້ລາຍມືອັນປານີດຈົບງາມທີ່ເປັນເອກະລັກອັນໂດດເດັ່ນຂອງຊາດ.

**ມາດຕາ 2 ຊຸດເຄື່ອງນຸ່ງປະຈຳຊາດ**

ຊຸດເຄື່ອງນຸ່ງປະຈຳຊາດ ແມ່ນ ເຄື່ອງນຸ່ງຫົ່ມ, ເຄື່ອງປະດັບເອ້ ທີ່ເປັນເອກະລັກ ແລະ ມູນເຊື້ອວັດທະນະທຳ ທີ່ນຳໃຊ້ແຕ່ງກາຍຂອງທ່ານຍິງ ແລະ ທ່ານຊາຍ ເພື່ອເຂົ້າຮ່ວມ ພິທີທາງການ, ພິທີການ ແລະ ພິທີກຳ ຕາມຄວາມເໝາະສົມ.

**ມາດຕາ 3 ຂອບເຂດການນຳໃຊ້ດຳລັດ**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຢູ່ພາຍໃນ ແລະ ຕ່າງປະເທດທີ່ພົວພັນກັບຊຸດເຄື່ອງນຸ່ງປະຈຳຊາດ.

**ມາດຕາ 4 ອົງປະກອບ ຊຸດເຄື່ອງນຸ່ງປະຈຳຊາດທ່ານຍິງ**

ອົງປະກອບ ຊຸດເຄື່ອງນຸ່ງປະຈຳຊາດ ທ່ານຍິງ ມີ ດັ່ງນີ້:

1. ເສື້ອ;
2. ສິ້ນ;
3. ແພບ່ຽງ;
4. ເກີບ.

**ມາດຕາ 5 ອົງປະກອບຊຸດເຄື່ອງນຸ່ງປະຈຳຊາດ ທ່ານຊາຍ**

ອົງປະກອບ ຊຸດເຄື່ອງນຸ່ງປະຈຳຊາດ ທ່ານຊາຍ ມີ ດັ່ງນີ້:

1. ເສື້ອ;
2. ໂສ້ງ;
3. ເກີບ.

**ມາດຕາ 6 ມາດຕະຖານ ຊຸດເຄື່ອງນຸ່ງປະຈຳຊາດທ່ານຍິງ**

ມາດຕະຖານ ຊຸດເຄື່ອງນຸ່ງປະຈຳຊາດທ່ານຍິງ ມີ ດັ່ງນີ້:

1. ເສື້ອ:

- ແພເສື້ອ: ແພໄໝ, ແພຝ້າຍ ທີ່ເປັນຜະລິດຕະພັນຂອງລາວ;
- ສີເສື້ອ: ບໍ່ຈຳກັດສີ;
- ຄໍເສື້ອ: ຂະໜາດ ສີ່ ຫາ ເຈັດ ຊັງຕີແມັດ, ຄໍປ້າຍໃສ່ແຂບ ປ້າຍຂວາ ຫາ ຊ້າຍ, ຕໍ່າ ຫຼື ປັກແສ່ວດ້ວຍຝ້າຍ ຫຼື ໄໝ ແລະ ຕິດກະດຸມ ທີ່ມີສີກົມກືນກັບສີແພເສື້ອ ສອງ ຫາ ສາມ ເມັດ ຢູ່ປາຍແຂບເສື້ອ;
- ແຂນເສື້ອ: ແຂນຍາວຊິງກະບອກ ຍາວກາຍແຂນສອກ ເຖິງ ຂໍ້ແຂນ.

2. ສິ້ນ:

- ຜືນສິ້ນ: ມີຫົວສິ້ນ ແລະ ຕີນສິ້ນ;
- ສິ້ນຝ້າຍ ແລະ ສິ້ນໄໝ ລາຍຈົກ, ລາຍຂິດ, ລາຍຂັ້ນ ແລະ ລາຍອື່ນ ຕາມຄວາມເໝາະສົມ;
- ຕີນສິ້ນ ຂະໜາດ ສິບແປດ ຫາ ຊາວຫ້າ ຊັງຕີແມັດ ສີກົມກືນກັບຜືນ;

3. ແພບ່ຽງ: ແພບ່ຽງຕໍ່າເປັນຊຸດກົມກືນກັບຜືນສິ້ນ, ຂະໜາດລວງຍາວ ສອງຮ້ອຍຊາວ ຫາ ສອງຮ້ອຍຊາວຫ້າ ຊັງຕີແມັດ, ລວງກວ້າງ ສາມສິບຫົກ ຫາ ສີ່ສິບ ຊັງຕີແມັດ;

4. ເກີບ: ເກີບສຸບ ປິດສົ້ນ ປິດປາຍ ມີສົ້ນ, ສີດຳ, ສີນ້ຳຕານ ຫຼື ສີອື່ນ ທີ່ກົມກືນກັບເຄື່ອງນຸ່ງ.

**ມາດຕາ 7 ມາດຕະຖານ ຊຸດເຄື່ອງນຸ່ງປະຈຳຊາດທ່ານຊາຍ**

ມາດຕະຖານ ຊຸດເຄື່ອງນຸ່ງປະຈຳຊາດທ່ານຊາຍ ມີ ດັ່ງນີ້:

1. ເສື້ອ:

- ແພເສື້ອ: ແພໄໝ ຫຼື ແພຝ້າຍ ທີ່ເປັນຜະລິດຕະພັນຂອງລາວ;
- ສີເສື້ອ: ບໍ່ຈຳກັດສີ;
- ຄໍເສື້ອ: ຄໍຕັ້ງປິດ;
- ຖົງເສື້ອເປັນຖົງເຈາະ ຢູ່ເບື້ອງເທິງດ້ານຊ້າຍ ໜຶ່ງ ຖົງບໍ່ມີຝາປິດ, ຖົງເສື້ອລຸ່ມ ສອງ ຖົງ ມີຝາປິດ;
- ແຂນເສື້ອ: ແຂນຍາວຊິງກະບອກ ຕິດກະດຸມ ສາມ ເມັດ ຢູ່ປາຍແຂນເສື້ອ;
- ດ້ານຫຼັງເສື້ອແຈກ ສອງ ເບື້ອງ;
- ກະດຸມເສື້ອ ຫ້າ ຫາ ເຈັດ ເມັດ.

2. ໂສ້ງ:

- ແພໂສ້ງ: ແພສີດຳ, ສີມືດ ທີ່ເປັນຜະລິດຕະພັນລາວ ຫຼື ແພອື່ນ;
- ໂສ້ງ: ຂາຍາວຊິງກະບອກ.

3. ເກີບ: ເກີບສີດຳ ຫຼື ສີມືດ ແລະ ຖົງເທົ້າສີດຳ ຫຼື ສີມືດ.

**ມາດຕາ 8 ຂໍ້ຫ້າມ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພຶດຕິກໍາ ດັ່ງນີ້:

1. ແຕ່ງກາຍຊຸດເຄື່ອງນຸ່ງປະຈໍາຊາດ ເຄື່ອນໄຫວ ຫຼື ກະທໍາຜິດ ກົດໝາຍ ແລະ ລະບຽບການ;

2. ນໍາເອົາຊຸດເຄື່ອງນຸ່ງປະຈໍາຊາດ ໄປໂຄສະນາ ບິດເບືອນ, ໃສ່ຮ້າຍປ້າຍສີ, ລົບລູ່, ແຕະຕ້ອງກຽດສັກສີ ແລະ ເປັນການແບ່ງແຍກຄວາມສາມັກຄີ ພາຍໃນຊາດ;

3. ນໍາເອົາຊຸດເຄື່ອງນຸ່ງປະຈໍາຊາດ ໄປເປັນເຄື່ອງແບບຂອງພະນັກງານອົງການຈັດຕັ້ງຕົນ;

4. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 9 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ເປັນເຈົ້າການປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດດໍາລັດສະບັບນີ້ ໃຫ້ໄດ້ຮັບຜົນດີ.

ບັນດາກະຊວງ, ອົງການຈັດຕັ້ງ ພັກ-ລັດ, ອົງການຈັດຕັ້ງມະຫາຊົນ, ອົງການປົກຄອງທ້ອງຖິ່ນ, ອົງການ ຈັດຕັ້ງສັງຄົມ, ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດ ຕາມດໍາລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 10 ຜົນສັກສິດ**

ດໍາລັດສະບັບນີ້ ມີຜົນສັກສິດ ພາຍຫຼັງໄດ້ລົງລາຍເຊັນ ເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ພັນຄໍາ ວິພາວັນ